ແຜນງານດັ່ງກ່າວ ແນໃສ່ບັນດາເມືອງທີ່ມີຈຳນວນເດັກນ້ອຍໃນໄວຮຽນທີ່ຍັງບໍ່ໄດ້ເຂົ້າໂຮງຮຽນເຖິງ 75 ສ່ວນຮ້ອຍ - ເຊິ່ງໃນນັ້ນຈຳນວນເດັກນ້ອຍຜູ້ຍິງ ແມ່ນຫຼາຍກວ່າເດັກນ້ອຍຜູ້ຊາຍ.

ແຜນງານດັ່ງກ່າວແມ່ນແນໃສ່ເພື່ອຮັບປະກັນວ່າໃນປີ 2013 ຈຳນວນຫຼາຍກວ່າເຄິ່ງໜຶ່ງຂອງເດັກນ້ອຍເຫຼົ່ານີ້ ຈະໄດ້ເຂົ້າຮຽນໃນລະດັບການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ. ເປົ້າໝາຍໄລຍະຍາວຂອງແຜນງານແມ່ນເພື່ອຮັບປະກັນວ່າ ເດັກນ້ອຍນັກຮຽນຈະສືບຕໍ່ຮຽນຈົນຈົບຊັ້ນປໍ5. ເດັກນ້ອຍຈະໄດ້ຮໍ່າຮຽນໃນສະພາບແວດລ້ອມທີ່ປອດໄພ, ໄດ້ຮັບການປົກປ້ອງ ແລະ ມີສິ່ງແວດລ້ອມທີ່ດີ, ໂດຍໄດ້ຊົມໃຊ້ນໍ້າສະອາດ ແລະ ສຸຂາພິບານທີ່ເໝາະສົມ.

ຄະນະກຳມະການພັດທະນາການສຶກສາຂັ້ນບ້ານທີ່ຫ້າວຫັນ ຈະຊ່ວຍສົ່ງເສີມຄວາມເປັນເຈົ້າການຂອງທ້ອງຖິ່ນ, ເຮັດໃຫ້ມີການເຂົ້າຮ່ວມຂອງຊຸມຊົນໃນການຄຸ້ມຄອງໂຮງຮຽນຫລາຍຂຶ້ນ. ໂຮງຮຽນຈະສາມາດໄດ້ຮັບກ້ອນທຶນຂະໜາດນ້ອຍ ເພື່ອຈັດຕັ້ງປະຕິບັດແຜນພັດທະນາໂຮງຮຽນ. ຕົວຢ່າງເຊັ່ນ: ຊຸມຊົນອາດຈະເລືອກທີ່ຈະປັບປຸງເດີ່ນໂຮງຮຽນ, ສ້າງສະໜາມຫລິ້ນ ຫຼື ຊື້ອຸປະກອນການຮຽນ-ການສອນເພີ່ມເຕີມ ຫຼື ອຸປະກອນກິລາ.


Photo by: Bart Verweij

## ຜົນໄດ້ຮັບທີ່ຄາດຫວັງ ເມື່ອແຜນງານການສຶກສາເພື່ອທຸກຄົນຂອງແຜນພັດທະນາຂະແໜງການສຶກສາສິ້ນສຸດລົງ:

- ໂຮງຮຽນຫຼາຍກວ່າ 1,500 ຫຼັງ ໄດ້ຮັບການກໍ່ສ້າງ ຫຼື ປົວແປງ
- ຄູສອນຈຳນວນຫຼາຍກວ່າ 8,000 ຄົນ ໄດ້ຮັບການຝຶກອົບຮົມ
- ເດັກນ້ອຍຈຳນວນຫຼາຍກວ່າ 170,000 ຄົນ ທີ່ບໍ່ໄດ້ເຂົ້າໂຮງຮຽນໃນປະຈຸບັນ ຈະໄດ້ຮັບການສຶກສາທີ່ມີຄຸນນະພາບ

ແຜນງານດັ່ງກ່າວແມ່ນແນໃສ່ເພື່ອຮັບປະກັນວ່າໃນປີ 2013 ຈຳນວນຫຼາຍກວ່າເຄິ່ງໜຶ່ງຂອງເດັກນ້ອຍທີ່ບໍ່ໄດ້ເຂົ້າໂຮງຮຽນໃນບັນດາເມືອງເປົ້າໝາຍຈະໄດ້ເຂົ້າຮຽນໃນລະດັບການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ.


Photo by: Bart Verweij


Photo by: Bart Verweij

ໃນປີ 2010-2011, ລັດຖະບານອົດສະຕຣາລີ ຍັງໄດ້ຮ່ວມມືກັບອົງການອຸຍນິເຊບ (UNICEF), ອົງການອາຫານໂລກ (WFP) ແລະ ອົງການອຸຍແນດສະໂກ (UNESCO) ເພື່ອສະໜັບສະໜູນກະຊວງສຶກສາທິການໃນການວາງແຜນ ແລະ ກະກຽມການຈັດຕັ້ງປະຕິບັດແຜນງານການສຶກສາເພື່ອທຸກຄົນຂອງແຜນພັດທະນາຂະແໜງການສຶກສາ, ໂດຍສະເພາະແມ່ນໂຮງຮຽນຄຸນນະພາບ, ແຜນງານສ້າງຄວາມພ້ອມໃຫ້ແກ່ເດັກກ່ອນໄວຮຽນຂັ້ນຊຸມຊົນ, ແຜນງານສະໜອງອາຫານທ່ຽງໃນໂຮງຮຽນ ແລະ ຄູສອນເຄື່ອນທີ່.

ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:
ອົງການເພື່ອການພັດທະນາສາກົນຂອງອົດສາຕຣາລີ (AusAID)
ສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ
ຖະໜົນທ່າເດື່ອ, ຫຼັກ 4
ວັດນາກ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 856 21 353800
ໂທລະສານ: 856 21 353831
ເວັບໄຊ໌: www.ausaid.gov.au

www.ausaid.gov.au
www.ausaid.gov.au

Australian Government
AusAID


Photo by: Bart Verweij

# ການສະໜັບສະໜູນຂອງລັດຖະບານອົດສະຕຣາລີ ຕໍ່ແຜນງານການສຶກສາເພື່ອທຸກຄົນຂອງແຜນພັດທະນາຂະແໜງການສຶກສາ ຢູ່ ສປປ ລາວ

ແຜນງານການສຶກສາເພື່ອທຸກຄົນຂອງແຜນພັດທະນາຂະແໜງການສຶກສາ ແມ່ນອີງໃສ່ໂຄງການສຶກສາຂັ້ນພື້ນຖານສອງໂຄງການທີ່ໄດ້ຮັບການສະໜັບສະໜູນ ໂດຍລັດຖະບານອົດສະຕຣາລີ ໃນໄລຍະຜ່ານມາເຊິ່ງໄດ້ຮັບຜົນສຳເລັດໃນການປັບປຸງອັດຕາການເຂົ້າຮຽນ ແລະ ອັດຕາການຮຽນຈົບຊັ້ນ ໂດຍການປັບປຸງຄຸນນະພາບຂອງໂຮງຮຽນ, ໂຄງການອາຫານເສີມ ແລະ ການກໍ່ສ້າງຫ້ອງຮຽນ.

## ການຮ່ວມງານໃນລະດັບສາກົນ

ກອງທຶນເລັ່ງລັດສຳລັບການສຶກສາເພື່ອທຸກຄົນ ເປັນການຮ່ວມມືໃນລະດັບສາກົນຂອງບັນດາປະເທດທີ່ກຳລັງພັດທະນາ ແລະ ປະເທດຜູ້ໃຫ້ທຶນ, ບັນດາສະຖາບັນຮ່ວມມືຫຼາຍຝ່າຍ, ບັນດາອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນເອກະຊົນ, ໂດຍມີຈຸດມຸ້ງໝາຍເພື່ອຮັບປະກັນວ່າເດັກນ້ອຍໝົດທຸກຄົນໄດ້ຮັບການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ.

ການຮ່ວມມືກັນດັ່ງກ່າວ ແມ່ນເພື່ອໃຫ້ການຊ່ວຍເຫຼືອດ້ານການເງິນ ແກ່ບັນດາປະເທດ ທີ່ລັດຖະບານ ແລະ ຜູ້ໃຫ້ທຶນໄດ້ຮ່ວມກັນພັດທະນາແຜນງານຂອງຂະແໜງສຶກສາທີ່ເປັນໜ້າເຊື່ອຖື. ລັດຖະບານອົດສະຕຣາລີ ໄດ້ເຮັດວຽກຮ່ວມກັບກະຊວງສຶກສາທິການ ແລະ ຄູ່ຮ່ວມພັດທະນາອື່ນໆ ໃນຂັ້ນຕອນການສະໝັກເຂົ້າເປັນສະມາຊິກຂອງກອງທຶນເລັ່ງລັດໃນປີ 2009. ໃນປີ 2010 ສປປ ລາວ ປະສົບຜົນສຳເລັດໃນການຂໍອະນຸມັດນຳໃຊ້ທຶນຈຳນວນເຖິງ 30 ລ້ານໂດລາສະຫະລັດ ຈາກກອງທຶນເລັ່ງລັດ-ເຄັດຕາລິຕິກ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນງານຂອງຂະແໜງການ.

ອົງການອົສເອດ ແລະ ທະນາຄານໂລກ ໄດ້ປະກອບທຶນຊ່ວຍເຫຼືອເພີ່ມເຕີມໃສ່ທຶນຊ່ວຍເຫຼືອທີ່ໄດ້ຮັບຈາກກອງທຶນເລັ່ງລັດ -ເຄັດຕາລິຕິກ ເຮັດໃຫ້ແຜນງານການສຶກສາເພື່ອທຸກຄົນຂອງແຜນພັດທະນາຂະແໜງການສຶກສາ ຢູ່ ສປປ ລາວ ມີງົບປະມານລວມ ປະມານ 65.5 ລ້ານໂດລາສະຫະລັດ.

ແຜນງານການສຶກສາເພື່ອທຸກຄົນຂອງແຜນພັດທະນາຂະແໜງການສຶກສາ ຢູ່ ສປປ ລາວ ສະໜັບສະໜູນການຈັດຕັ້ງປະຕິບັດຂອບພັດທະນາຂະແໜງການສຶກສາເພື່ອບັນລຸການສຶກສາເພື່ອທຸກຄົນ ໃນລະດັບກຽມປະຖົມ ແລະ ຊັ້ນປະຖົມ.



Photo by: Bart Verweij



Photo by: Jim Holmes

## ແຜນງານການສຶກສາເພື່ອທຸກຄົນຂອງແຜນພັດທະນາຂະແໜງການສຶກສາ ຢູ່ ສປປ ລາວ:

- ລັດຖະບານອົດສະຕຣາລີ ປະກອບສ່ວນທຶນຊ່ວຍເຫຼືອປະມານ 21 ລ້ານໂດລາອົດສະຕຣາລີ
- ໄລຍະເວລາຂອງແຜນງານ: 2011 – 2013
- ຄູ່ຮ່ວມງານຫລັກ: ກະຊວງສຶກສາທິການ ຂອງສປປ ລາວ, ທະນາຄານໂລກ

ແຜນງານການສຶກສາເພື່ອທຸກຄົນຂອງແຜນພັດທະນາຂະແໜງການສຶກສາ ຢູ່ ສປປ ລາວ ແມ່ນແຜນງານການສຶກສາຊັ້ນກຽມປະຖົມ ແລະ ຊັ້ນປະຖົມ ທີ່ກຳລັງໄດ້ຮັບການຈັດຕັ້ງປະຕິບັດຢູ່ໃນ 60 ເມືອງທີ່ດ້ອຍໂອກາດດ້ານການສຶກສາທີ່ສຸດໃນລາວ. ແຜນງານດັ່ງກ່າວ ໄດ້ຮັບການຄຸ້ມຄອງໂດຍ ກະຊວງສຶກສາທິການ.

ແຜນງານດັ່ງກ່າວແມ່ນແນໃສ່ເພື່ອຮັບປະກັນວ່າໃນປີ 2013 ຈຳນວນເດັກນ້ອຍຫຼາຍກວ່າເຄິ່ງໜຶ່ງທີ່ບໍ່ໄດ້ເຂົ້າໂຮງຮຽນໃນບັນດາເມືອງເປົ້າໝາຍ ຈະໄດ້ເຂົ້າຮຽນໃນລະດັບການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ. ໄດ້ມີແຜນສ້າງ ຫຼື ປົວແປງໂຮງຮຽນຫຼາຍກວ່າ 1,500 ຫຼັງ ແລະ ຝຶກອົບຮົມຄູສອນຫຼາຍກວ່າ 8,000 ຄົນ.

ທຶນຊ່ວຍເຫຼືອຈາກອົດສະຕຣາລີ ລວມໃສ່ກັບ 30 ລ້ານໂດລາສະຫະລັດ ຈາກກອງທຶນເລັ່ງລັດ ສຳລັບການສຶກສາເພື່ອທຸກຄົນ ແລະ 15.5 ລ້ານໂດລາສະຫະລັດຈາກທະນາຄານໂລກ ຈະສະໜັບສະໜູນ:

- ການປຸກສ້າງໂຮງຮຽນໂດຍຊຸມຊົນເປັນເຈົ້າການ: ແຜນງານດັ່ງກ່າວ ແມ່ນຈະສ້າງໂຮງຮຽນໃໝ່ ຫຼື ປົວແປງຫ້ອງຮຽນ ໃນ 1,500 ໝູ່ບ້ານ.
- ໂຮງຮຽນຄຸນນະພາບ: ແຜນງານດັ່ງກ່າວ ຈະຂະຫຍາຍການຈັດຕັ້ງປະຕິບັດຮູບແບບ 'ໂຮງຮຽນຄຸນນະພາບ' ຂອງລັດຖະບານ - ປະສົມປະສານກັບການຝຶກອົບຮົມຄູສອນ, ການສະໜອງອຸປະກອນການຮຽນ-ການສອນ, ແລະການມີສ່ວນຮ່ວມຂອງຊຸມຊົນ.
- ຄູສອນເຄື່ອນທີ່: ແຜນງານດັ່ງກ່າວ ຈະນຳໃຊ້ຄູສອນເຄື່ອນທີ່ ເພື່ອສອນນັກຮຽນຢູ່ບ້ານທີ່ບໍ່ມີໂຮງຮຽນ. ວິທີການນີ້ ຈະຮັບປະກັນການສຶກສາຊັ້ນປະຖົມແບບຫຍໍ້ເທົ່າສຳລັບເດັກທີ່ບໍ່ໄດ້ເຂົ້າໂຮງຮຽນໃນບັນດາເມືອງເປົ້າໝາຍ.
- ໂຄງການອາຫານທ່ຽງໃນໂຮງຮຽນ: ແຜນງານດັ່ງກ່າວ ຈະສະໜອງອາຫານທ່ຽງໃຫ້ເດັກໃນໂຮງຮຽນ, ນຳໃຊ້ອາຫານທີ່ປູກ ແລະ ຈັດຊື້ຢູ່ທ້ອງຖິ່ນ, ສິ່ງນີ້ຈະເປັນແຮງຈູງໃຈໃຫ້ແກ່ເດັກນ້ອຍມາເຂົ້າຮຽນ ແລະ ບໍ່ອອກໂຮງຮຽນ.

- ສ້າງຄວາມເຂັ້ມແຂງໃຫ້ລະບົບ: ປັບປຸງຂີດຄວາມສາມາດ ແລະ ການປະສານງານໃນທຸກໆລະດັບຂອງລະບົບການສຶກສາ ເພື່ອຮັບປະກັນວ່າຄຸນນະພາບຂອງການສຶກສາຈະຄົງຢູ່ພາຍຫຼັງແຜນງານສິ້ນສຸດລົງ.

ວິທີການຮຽນຮ່ວມ: ແຜນງານດັ່ງກ່າວຈະອີງໃສ່ນະໂຍບາຍຂອງລັດຖະບານລາວໃນການສະໜອງສະພາບແວດລ້ອມທີ່ປອດໄພໃນໂຮງຮຽນສຳລັບເດັກຍິງ, ຮັບປະກັນການສຶກສາທີ່ແທດເໝາະກັບເດັກພິການ, ແລະ ເຂົ້າເຖິງເດັກນ້ອຍທີ່ທຸກຍາກທີ່ສຸດໃນຊຸມຊົນ.



Photo by: Bart Verweij